# What is a Hate Crime?

> "… A crime committed based on the victim's perceived or actual race, color, religion, national origin, sexual orientation, gender, gender identity, or disability."

## 1 Ensure Your Safety & Seek Help

**Your first and foremost priority should be to ensure your physical safety!**

+ Seek medical attention immediately, if necessary.
+ Talk to someone you trust about the experience.
+ Remember that hate crimes can happen to anyone. You are not to blame!

## 2 Record Details About The Incident

**After the initial shock of the incident has passed, write down exactly what happened.**

+ Include as many specific details as possible.
+ Keep and make copies of all documentation (e.g., hate mail or recordings of hate calls).
+ Photograph any physical injuries, offensive graffiti, and/or evidence of vandalism.

## 3 Report The Incident

+ If you experience hate, you should report it. Contact local law enforcement and provide them with detailed information. Secure the names, contact information, and badge numbers of the investigating officers.
+ **Report a suspected hate crime to the FBI at 1-800-225-5324.** You can state your preferred language for translation services.
+ Consider reporting the incident to a community organization that is tracking hate crimes. This is only for data collection purposes. You should also report to local law enforcement and the FBI.
+ If you are concerned about your immigration status, consider seeking legal advice. U.S. immigration law provides several protections for immigrants who are victims of crime.

## 4 Contact A Community Organization

Contact a local community organization for assistance and support. Community organizations may be able to assist with dealing with law enforcement, language translation, seeking medical care or psychological counseling, locating an attorney, handling media, fundraising, and identifying a support network.

### *Resources for more information on...*

Legal aid, working with law enforcement, mental health and more, visit the National Asian Pacific Bar Association's (NAPABA) Hate Crime Resources at: **www.napaba.org/page/HateCrimeResources**

COVID-19, visit the Asian & Pacific Islander American Health Forum's website at: **www.apiahf.org/**

NAPABA

APIAHF
ASIAN & PACIFIC ISLANDER AMERICAN HEALTH FORUM

# ອາຊະຍາກຳລາກຄວາມກຽດຊັງແມ່ນຫຍັງ?

> "ອາຊະຍາກຳລາກຄວາມກຽດຊັງແມ່ນອາຊະຍາກຳທີ່ເກີດຂຶ້ນໂດຍອີງໃສ່ເຊື້ອຊາດທີ່ແທ້ຈິງ ຫຼື ຖືກຮັບຮູ້, ສີຜິວ, ສາສະໜາ, ຊາດກຳເນີດ, ລົດສະນິຍົມທາງເພດ, ເພດ, ລັກສະນະທາງເພດ ຫຼື ຄວາມພິການຂອງຜູ້ເຄາະຮ້າຍ."

## 1 ຮັບປະກັນຄວາມປອດໄພຂອງທ່ານ ແລະ ຊອກຫາຄວາມຊ່ວຍເຫຼືອ

**ສິ່ງສຳຄັນອັນທຳອິດ ແລະ ເໜືອສິ່ງອື່ນໃດແມ່ນຮັບປະກັນຄວາມປອດໄພທາງຮ່າງກາຍຂອງທ່ານ.**

- ຊອກຫາຄວາມຊ່ວຍເຫຼືອທາງການແພດທັນທີ, ຖ້າຈຳເປັນ.
- ລົມກັບຄົນທີ່ທ່ານເຊື່ອໃຈກ່ຽວກັບປະສົບການ.
- ຈື່ໄວ້ວ່າອາຊະຍາກຳຈາກຄວາມກຽດຊັງສາມາດເກີດຂຶ້ນກັບທຸກຄົນ. ເຈົ້າບໍ່ຕ້ອງໂທດຕົວເອງ!

## 2 ບັນທຶກລາຍລະອຽດກ່ຽວກັບເຫດການ

ຫຼັງຈາກການຕື່ນຕົກໃຈຕໍ່ເຫດການຜ່ານໄປແລ້ວ, ໃຫ້ຂຽນບັນທຶກໃຫ້ຊັດເຈນວ່າເກີດຫຍັງຂຶ້ນ.

- ໃສ່ລາຍລະອຽດສະເພາະໃຫ້ຫຼາຍເທົ່າທີ່ເປັນໄປໄດ້.
- ເກັບຮັກສາ ແລະ ເຮັດສຳເນົາເອກະສານທັງໝົດ (ຕົວຢ່າງ: ຈົດໝາຍສະແດງຄວາມກຽດຊັງ ຫຼື ບັນທຶກສຽງການໂທສະແດງຄວາມກຽດຊັງ).
- ຖ່າຍຮູບການບາດເຈັບທາງຮ່າງກາຍ, ຮູບກຣາຟິຕີທີ່ຫຍາບຄາຍ ແລະ/ຫຼື ຫຼັກຖານສະແດງເຖິງການທຳລາຍຊັບສິນ.

### ແຫຼ່ງຂໍ້ມູນ

ສຳລັບຂໍ້ມູນເພີ່ມເຕີມກ່ຽວກັບການຊ່ວຍເຫຼືອດ້ານກົດໝາຍ, ການປະສານງານກັບໜ່ວຍງານບັງຄັບໃຊ້ກົດໝາຍ, ສຸຂະພາບຈິດ ແລະ ອື່ນໆ, ກະລຸນາເຂົ້າເບິ່ງແຫຼ່ງຂໍ້ມູນອາຊະຍາກຳຈາກຄວາມກຽດຊັງຂອງ National Asian Pacific Bar Association (NAPABA) ທີ່ (**www.napaba.org/page/HateCrimeResources**)

NAPABA

APIAHF ASIAN & PACIFIC ISLANDER AMERICAN HEALTH FORUM

## 3 ລາຍງານເຫດການ

- ຖ້າທ່ານປະສົບກັບຄວາມກຽດຊັງ, ທ່ານຄວນລາຍງານມັນ. ຕິດຕໍ່ໜ່ວຍງານບັງຄັບໃຊ້ກົດໝາຍທ້ອງຖິ່ນ ແລະ ໃຫ້ຂໍ້ມູນລະອຽດແກ່ເຂົາເຈົ້າ. ຮັກສາຊື່, ຂໍ້ມູນຕິດຕໍ່ ແລະ ໝາຍເລກປະຈຳຕົວຂອງພະນັກງານສືບສວນໃຫ້ປອດໄພ.
- **ລາຍງານອາຊະຍາກຳຈາກຄວາມກຽດຊັງທີ່ໜ້າສົງໄສໄປທີ່ FBI ທີ່ເບີ 1-800-225-5324.** ທ່ານສາມາດແຈ້ງພາສາທີ່ທ່ານຕ້ອງການສຳລັບການບໍລິການແປພາສາ.
- ພິຈາລະນາລາຍງານເຫດການໄປທີ່ອົງການຈັດຕັ້ງຊຸມຊົນທີ່ຕິດຕາມອາຊະຍາກຳຈາກຄວາມກຽດຊັງ. ນີ້ແມ່ນຈຸດປະສົງເພື່ອເກັບກຳຂໍ້ມູນເທົ່ານັ້ນ. ທ່ານຍັງຄວນລາຍງານໄປທີ່ໜ່ວຍງານບັງຄັບໃຊ້ກົດໝາຍທ້ອງຖິ່ນ ແລະ **FBI.**
- ຖ້າທ່ານກັງວົນກ່ຽວກັບສະຖານະການຍ້າຍຖິ່ນຖານຂອງທ່ານ, ໃຫ້ພິຈາລະນາຊອກຫາທີ່ປຶກສາດ້ານກົດໝາຍ. ກົດໝາຍວ່າດ້ວຍການຍ້າຍຖິ່ນຖານຂອງສະຫະລັດໃຫ້ການປົກປ້ອງຫຼາຍປະການແກ່ຜູ້ອົບພະຍົບທີ່ເປັນເຫຍື່ອຂອງອາຊະຍາກຳ.

## 4 ຕິດຕໍ່ອົງການຈັດຕັ້ງຊຸມຊົນ

ຕິດຕໍ່ອົງການຈັດຕັ້ງຊຸມຊົນເພື່ອຂໍຄວາມຊ່ວຍເຫຼືອ ແລະ ການສະໜັບສະໜູນ. ອົງການຈັດຕັ້ງຊຸມຊົນອາດຈະສາມາດຊ່ວຍເຫຼືອໃນດ້ານການບັງຄັບໃຊ້ກົດໝາຍ, ການແປພາສາ, ການຊອກຫາການເບິ່ງແຍງດ້ານການແພດ ຫຼື ໃຫ້ຄຳປຶກສາດ້ານຈິດໃຈ, ການຈັດຫານັກກົດໝາຍ, ການຮັບມືກັບສື່, ການລະດົມທຶນ ແລະ ການລະບຸເຄືອຂ່າຍສະໜັບສະໜູນ.

ສຳລັບຂໍ້ມູນເພີ່ມເຕີມກ່ຽວກັບ COVID-19, ກະລຸນາເຂົ້າເບິ່ງເວັບໄຊຂອງ Asian & Pacific Islander American Health Forum ທີ່ (**www.apiahf.org**)

# Working With...

## Law Enforcement

### The Preliminary Investigation

Law enforcement officials will first conduct a preliminary investigation at the scene of the crime.

### The Follow-Up Investigation

There may be a follow-up investigation. Officers may conduct interviews, document the incident and apparent motives, arrest suspects, **notify the FBI.**

### Hate Crime Indicators

Law enforcement officials will consider the following bias indicators: racial, ethnic, gender and/or cultural differences; comments, written statements, or gestures; drawings, markings, symbols, or graffiti; organized hate groups; previous bias crimes or incident.

### FBI Involvement

The Federal Bureau of Investigation (FBI) is the lead agency for enforcing federal civil rights law. The Hate Crimes Unit of the FBI's Civil Rights Division investigates crimes motivated by bias toward race, color, religion, national origin, sexual orientation, gender identity, disability, or gender.

## The Media

### Develop Talking Points

Identify a specific target audience and create messages that will achieve your goals. Specify what you want people to do, how they should do it, and why.

### Issue A Press Release

If the topic is newsworthy, consider answering these questions in a press release: Who? What? When? Where? Why? And how? Keep the press release short and include your contact information.
Example: **http://bit.ly/3IGgIJD**

### Write Blog / Social Media Post

Summarize your main points, establish your credibility, and use evidence. Be as concise and to the point as possible. For social media, be sure to use the hashtag **#StopAAPIHate** to maximize visibility.

> ***Note:*** *Before speaking with the media, consider the victim's concerns regarding publicity. You may want to seek legal advice.*

### *Resources for more information on...*

Legal aid, working with law enforcement, mental health and more, visit the National Asian Pacific Bar Association's (NAPABA) Hate Crime Resources at: **www.napaba.org/page/HateCrimeResources**

COVID-19, visit the Asian & Pacific Islander American Health Forum's website at: **www.apiahf.org/**

NAPABA APIAHF ASIAN & PACIFIC ISLANDER AMERICAN HEALTH FORUM

# ການປະສານງານກັບໜ່ວຍງານບັງຄັບໃຊ້ກົດໝາຍ ແລະ ສື່

## ການບັງຄັບໃຊ້ກົດໝາຍ

### ການສືບສວນເບື້ອງຕົ້ນ

ທຳອິດພະນັກງານບັງຄັບໃຊ້ກົດໝາຍຈະດຳເນີນການສືບສວນເບື້ອງຕົ້ນໃນສະຖານທີ່ເກີດອາຊະຍາກຳ.

### ການສືບສວນຂັ້ນຕໍ່ໄປ

ອາດມີການສືບສວນຂັ້ນຕໍ່ໄປ. ພະນັກງານອາດດຳເນີນການສຳພາດ, ເຮັດເອກະສານກ່ຽວກັບເຫດການ ແລະ ແຮງຈູງໃຈທີ່ຊັດເຈນ, ຈັບກຸມຜູ້ຕ້ອງສົງໄສ ແລະ ແຈ້ງ FBI.

### ຕົວຊີ້ບອກອາຊະຍາກຳຈາກຄວາມກຽດຊັງ

ພະນັກງານບັງຄັບໃຊ້ກົດໝາຍຈະພິຈາລະນາຕົວຊີ້ບອກດ້ານອະຄະຕິຕໍ່ໄປນີ້: ຄວາມແຕກຕ່າງດ້ານເຊື້ອຊາດ, ຊົນເຜົ່າ, ເພດ ແລະ/ຫຼື ວັດທະນະທຳ; ຄຳເຫັນ, ຄຳຖະແຫຼງທີ່ເປັນລາຍລັກອັກສອນ ຫຼື ທ່າທາງ; ການແຕ້ມ, ການໝາຍ, ສັນຍາລັກ ຫຼື ກຣາຟິຕີ; ຈັດຕັ້ງກຸ່ມຄວາມກຽດຊັງ; ອາຊະຍາກຳ ຫຼື ເຫດການຈາກຄວາມອະຄະຕິກ່ອນໜ້ານີ້.

### ການມີສ່ວນຮ່ວມຂອງ FBI

ສຳນັກງານສືບສວນກາງ (FBI) ແມ່ນໜ່ວຍງານທີ່ນຳໜ້າໃນການບັງຄັບໃຊ້ກົດໝາຍສິດທິພົນລະເມືອງແຫ່ງລັດ. ໜ່ວຍງານອາຊະຍາກຳຈາກຄວາມກຽດຊັງຂອງພະແນກສິດທິພົນລະເມືອງຂອງ FBI ສືບສວນອາຊະຍາກຳທີ່ມີແຮງຈູງໃຈຈາກອະຄະຕິຕໍ່ກັບເຊື້ອຊາດ, ສີຜິວ, ສາສະໜາ, ຊາດກຳເນີດ, ລັດທິນິຍົມທາງເພດ, ລັກສະນະທາງເພດ, ຄວາມພິການ ຫຼື ເພດ.

## ສື່

### ພັດທະນາຂໍ້ຄວາມ ແລະ ຫົວຂໍ້ໃນການເວົ້າ

ລະບຸຜູ້ຊົມເປົ້າໝາຍ ແລະ ສ້າງຂໍ້ຄວາມເພື່ອສຳເລັດເປົ້າໝາຍຂອງທ່ານ. ເຈາະຈົງສິ່ງທີ່ທ່ານຕ້ອງການໃຫ້ຜູ້ຄົນປະຕິບັດ, ວິທີການປະຕິບັດ ແລະ ເຫດຜົນ.

### ເຜີຍແຜ່ອອກສື່

ຖ້າຫົວຂໍ້ເໝາະສົມແກ່ການເປັນຂ່າວ, ໃຫ້ພິຈາລະນາການຕອບຄຳຖາມເຫຼົ່ານີ້ເມື່ອເຜີຍແຜ່ອອກສື່: ໃຜ? ແມ່ນຫຍັງ? ເມື່ອໃດ? ບ່ອນໃດ? ຍ້ອນຫຍັງ? ແລະ ເປັນແນວໃດ? ຮັກສາການເຜີຍແຜ່ອອກສື່ໃຫ້ສັ້ນ ແລະ ໃສ່ຂໍ້ມູນຕິດຕໍ່ຂອງທ່ານໄປນຳ.
ຕົວຢ່າງ: **http://bit.ly/3lGgIJD**

### ຂຽນບລັອກ ຫຼື ໂພສສື່ສັງຄົມ

ສະຫຼຸບຫົວຂໍ້ຫຼັກຂອງທ່ານ, ສ້າງຄວາມໜ້າເຊື່ອຖືຂອງທ່ານ ແລະ ນຳໃຊ້ຫຼັກຖານ. ໃຫ້ກະທັດຮັດ ແລະ ກົງປະເດັນຫຼາຍທີ່ສຸດ. ສຳລັບສື່ສັງຄົມ, ໃຫ້ແນ່ໃຈວ່າໃສ່ແຮສແທັກ **#StopAAPIHate** ເພື່ອເຮັດໃຫ້ເກີດການພົບເຫັນຫຼາຍທີ່ສຸດ.

> ***"ກ່ອນຈະເວົ້າກັບສື່, ໃຫ້ພິຈາລະນາຄວາມກັງວົນຂອງຜູ້ເຄາະຮ້າຍກ່ຽວກັບການປະຊາສຳພັນ. ທ່ານອາດຕ້ອງການຊອກຫາທີ່ປຶກສາດ້ານກົດໝາຍ."***

### ແຫຼ່ງຂໍ້ມູນ

ສຳລັບຂໍ້ມູນເພີ່ມເຕີມກ່ຽວກັບການຊ່ວຍເຫຼືອດ້ານກົດໝາຍ, ການປະສານງານກັບໜ່ວຍງານບັງຄັບໃຊ້ກົດໝາຍ, ສຸຂະພາບຈິດ ແລະ ອື່ນໆ, ກະລຸນາເຂົ້າເບິ່ງແຫຼ່ງຂໍ້ມູນອາຊະຍາກຳຈາກຄວາມກຽດຊັງຂອງ National Asian Pacific Bar Association (NAPABA) ທີ່ (**www.napaba.org/page/HateCrimeResources**)

ສຳລັບຂໍ້ມູນເພີ່ມເຕີມກ່ຽວກັບ COVID-19, ກະລຸນາເຂົ້າເບິ່ງເວັບໄຊຂອງ Asian & Pacific Islander American Health Forum ທີ່ (**www.apiahf.org**)

NAPABA

APIAHF
ASIAN & PACIFIC ISLANDER AMERICAN HEALTH FORUM

# Checklist for Community Organizations

### *Offer Assistance to Hate Crime Victims*

Assess and provide for the particular needs of the victim(s). These needs can be filing a police report, working with police and prosecutors, seeking medical care or psychological counseling, locating an attorney, finding a language translator, handling media inquiries, obtaining financial assistance, and offering a support network.

### *Reporting Hate Crimes and Hate Incidents*

Determine whether the victim wants law enforcement involvement. Reporting to law enforcement will prompt further investigation. Reporting to community organizations that track hate incidents will only record the incident.

***Reporting to Law Enforcement***

**+** Contact local law enforcement and provide them with detailed information. Secure the names, contact information, and badge numbers of the investigating officers.

**+** **Report a suspected hate crime to the FBI at 1-800-225-5324**. You can state your preferred language for translation services.

***Reporting to Community Organizations***

Report the incident to a community organization that is tracking hate crimes, like **Stop AAPI Hate.** This is only for data collection purposes.

### *Speak out Against Acts of Hate*

Hate crimes must be denounced swiftly in order to provide a message to the public that hate will not be tolerated. Here are some things you can do to speak out against hate crimes:

***Communication:*** Issue a press release; contact local media; coordinate a press conference

***Community:*** Work with local leaders; organize community events

***Government:*** Facilitate meetings with law enforcement and local, state, and federal officials to address your community's concerns.

### *Educate and Mobilize the Community*

Raise community awareness regarding hate crimes and violence by providing workshops, holding community briefings, facilitating town hall meetings, organizing conferences or panel discussions, and translating community education materials.

### *Create an Anti-Hate Crime Task Force*

As a longer-term solution, create or take part in an anti-hate crime task force that meets on a regular basis and is involved with local and national organizations.

## *Resources for more information on...*

Legal aid, working with law enforcement, mental health and more, visit the National Asian Pacific Bar Association's (NAPABA) Hate Crime Resources at: **www.napaba.org/page/HateCrimeResources**

COVID-19, visit the Asian & Pacific Islander American Health Forum's website at: **www.apiahf.org/**

NAPABA APIAHF ASIAN & PACIFIC ISLANDER AMERICAN HEALTH FORUM

# ລາຍການກວດສອບສຳລັບອົງການຈັດຕັ້ງຊຸມຊົນ

### *ສະເໜີການຊ່ວຍເຫຼືອຕໍ່ຜູ້ເຄາະຮ້າຍອາຊະຍາກຳຈາກຄວາມກຽດຊັງ*

ປະເມີນ ແລະ ສະໜອງສິ່ງທີ່ຈຳເປັນຕໍ່ຜູ້ເຄາະຮ້າຍ. ສິ່ງຈຳເປັນເຫຼົ່ານີ້ອາດເປັນການຊ່ວຍຂຽນລາຍງານຕໍ່ຕຳຫຼວດ, ການປະສານງານກັບຕຳຫຼວດ ແລະ ຜູ້ດຳເນີນຄະດີ, ການຊອກຫາການເບິ່ງແຍງດ້ານການແພດ ຫຼື ໃຫ້ຄຳປຶກສາດ້ານຈິດໃຈ, ການຈັດຫານັກກົດໝາຍ, ການຊອກຫານາຍແປພາສາ, ການຮັບມືກັບການສອບຖາມຈາກສື່, ການຮັບການຊ່ວຍເຫຼືອດ້ານການເງິນ ແລະ ການສະເໜີເຄືອຂ່າຍສະໜັບສະໜູນ.

### *ການລາຍງານອາຊະຍາກຳຈາກຄວາມກຽດຊັງ ແລະ ເຫດການຈາກຄວາມກຽດຊັງ*

ລະບຸວ່າຜູ້ເຄາະຮ້າຍຕ້ອງການໃຫ້ມີການເຂົ້າຮ່ວມຂອງໜ່ວຍງານບັງຄັບໃຊ້ກົດໝາຍ ຫຼືບໍ່. ການລາຍງານຕໍ່ໜ່ວຍງານບັງຄັບໃຊ້ກົດໝາຍຈະພາໃຫ້ມີການສືບສວນຂັ້ນຕໍ່ໄປ. ການລາຍງານຕໍ່ອົງການຈັດຕັ້ງຊຸມຊົນທີ່ຕິດຕາມເຫດການຈາກຄວາມກຽດຊັງຈະເປັນພຽງແຕ່ການບັນທຶກເຫດການເທົ່ານັ້ນ.

***ການລາຍງານຕໍ່ໜ່ວຍງານບັງຄັບໃຊ້ກົດໝາຍ***

+ ຕິດຕໍ່ໜ່ວຍງານບັງຄັບໃຊ້ກົດໝາຍທ້ອງຖິ່ນ ແລະ ໃຫ້ຂໍ້ມູນລະອຽດແກ່ເຂົາເຈົ້າ. ຮັກສາຊື່, ຂໍ້ມູນຕິດຕໍ່ ແລະ ໝາຍເລກປະຈຳຕົວຂອງພະນັກງານສືບສວນໃຫ້ປອດໄພ.

+ ລາຍງານອາຊະຍາກຳຈາກຄວາມກຽດຊັງທີ່ໜ້າສົງໄສໄປທີ່ **FBI** ທີ່ເບີ 1-800-225-5324. ທ່ານສາມາດແຈ້ງພາສາທີ່ທ່ານຕ້ອງການສຳລັບການບໍລິການແປພາສາ.

***ການລາຍງານຕໍ່ອົງການຈັດຕັ້ງຊຸມຊົນ***

● ລາຍງານເຫດການຕໍ່ອົງການຈັດຕັ້ງຊຸມຊົນທີ່ຕິດຕາມອາຊະຍາກຳຈາກຄວາມກຽດຊັງເຊັ່ນStop AAPI Hate, ນີ້ແມ່ນຈຸດປະສົງເພື່ອເກັບກຳຂໍ້ມູນເທົ່ານັ້ນ.

### *ເວົ້າຕໍ່ຕ້ານການກະທຳຈາກຄວາມກຽດຊັງ*

ອາຊະຍາກຳຈາກຄວາມກຽດຊັງຕ້ອງຖືກປະນາມຢ່າງວ່ອງໄວເພື່ອເປັນການສົ່ງຂໍ້ຄວາມສູ່ສາທາລະນະວ່າຈະບໍ່ອົດກັ້ນຕໍ່ຄວາມກຽດຊັງ. ນີ້ແມ່ນບາງສິ່ງທີ່ທ່ານສາມາດເຮັດໄດ້ເພື່ອເວົ້າຕໍ່ຕ້ານອາຊະຍາກຳຈາກຄວາມກຽດຊັງ:

***ການສື່ສານ:*** ເຜີຍແຜ່ອອກສື່; ຕິດຕໍ່ສື່ທ້ອງຖິ່ນ; ປະສານງານການຖະແຫຼງຂ່າວ

***ຊຸມຊົນ:*** ເຮັດວຽກກັບຜູ້ນຳທ້ອງຖິ່ນ; ຈັດງານຊຸມຊົນ

***ລັດຖະບານ:*** ອຳນວຍຄວາມສະດວກຈັດກອງປະຊຸມກັບໜ່ວຍງານບັງຄັບໃຊ້ກົດໝາຍ ແລະ ທ້ອງຖິ່ນ, ລັດ ແລະ ເຈົ້າໜ້າທີ່ລັດຖະບານກາງເພື່ອຈັດການກັບຄວາມກັງວົນຂອງຊຸມຊົນທ່ານ.

### *ສຶກສາອົບຮົມ ແລະ ກຽມຄວາມພ້ອມຊຸມຊົນ*

ສ້າງຄວາມຮັບຮູ້ຂອງຊຸມຊົນກ່ຽວກັບອາຊະຍາກຳຈາກຄວາມກຽດຊັງ ແລະ ຄວາມຮຸນແຮງໂດຍການຈັດການສຳມະນາແບບປະຕິບັດ, ກອງປະຊຸມໃຫ້ຄວາມຮູ້ຊຸມຊົນ, ອຳນວຍຄວາມສະດວກການປະຊຸມໃນເມືອງ, ຈັດກອງປະຊຸມໃຫຍ່ ຫຼື ຈັດການໂອ້ລົມ ແລະ ແປເນື້ອຫາການສຶກສາຊຸມຊົນ.

### *ສ້າງກອງກຳລັງທີ່ຈັດການອາຊະຍາກຳຈາກຄວາມກຽດຊັງ*

ໃນການແກ້ບັນຫາໄລຍະຍາວ, ໃຫ້ສ້າງ ຫຼື ເຂົ້າຮ່ວມກອງກຳລັງທີ່ຈັດການອາຊະຍາກຳຈາກຄວາມກຽດຊັງທີ່ພົບປະກັນ ເປັນປົກກະຕິ ຫຼື ມີສ່ວນຮ່ວມກັບອົງການຈັດຕັ້ງລະດັບທ້ອງຖິ່ນ ແລະ ລະດັບຊາດ.

### *ແຫຼ່ງຂໍ້ມູນ*

ສຳລັບຂໍ້ມູນເພີ່ມເຕີມກ່ຽວກັບການຊ່ວຍເຫຼືອດ້ານກົດໝາຍ, ການປະສານງານກັບໜ່ວຍງານບັງຄັບໃຊ້ກົດໝາຍ, ສຸຂະພາບຈິດ ແລະ ອື່ນໆ, ກະລຸນາເຂົ້າເບິ່ງແຫຼ່ງຂໍ້ມູນອາຊະຍາກຳຈາກຄວາມກຽດຊັງຂອງ National Asian Pacific Bar Association (NAPABA) ທີ່ (**www.napaba.org/page/HateCrimeResources**)

ສຳລັບຂໍ້ມູນເພີ່ມເຕີມກ່ຽວກັບ COVID-19, ກະລຸນາເຂົ້າເບິ່ງເວັບໄຊຂອງ Asian & Pacific Islander American Health Forum ທີ່ (**www.apiahf.org**)

NAPABA

APIAHF ASIAN & PACIFIC ISLANDER AMERICAN HEALTH FORUM

# Frequently Asked Questions

**What is a Hate Crime?** A crime committed based on the victim's perceived or actual race, color, religion, national origin, sexual orientation, gender, gender identity, or disability.

### *What is the difference between a "hate crime" and a "hate incident"?*

**Hate crimes** must involve a "crime" and it often involves harassment and/or a violent crime, such as assault, murder, arson, vandalism, or threats to commit such crimes. It may also cover conspiring or asking another person to commit such crimes, even if the crime was never carried out.

**Hate incidents** are acts of prejudice that are not crimes and do not involve violence, threats, or property damage. The most common examples are isolated forms of speech in the form of racial slurs.

### *Why should I report a "hate crime"?*

There is a significant disparity between hate crimes that actually occur and those reported to law enforcement. It is critical to report hate crimes not only to show support and get help for victims, but also to send a clear message that the community will not tolerate these kinds of crimes. Reporting hate crimes allows communities and law enforcement to fully understand the scope of the problem in a community and put resources toward preventing and addressing attacks based on bias and hate. Regardless of whether an incident amounts to a hate crime or a hate incident, it should be reported so that an investigation can occur.

### *How is a hate crime different from a "regular" crime?*

Hate crimes have a broader effect than most other kinds of crime. Hate crime victims include not only the crime's immediate target but also others like them. Hate crimes affect families, communities, and at times, the entire nation.

### *How is the prosecution of a hate crime different from a regular crime?*

Hate crime laws vary from state-to-state. Most hate crime laws provide for enhanced penalties if there is sufficient evidence that an offender has committed a crime with bias motivation. Moreover, hate crime laws sometimes provide increased financial, technical, and forensic support to state and local law enforcement involved in prosecuting hate crime cases. Even if a state or territory does not have a hate crimes law, hate crimes can still be reported.

### *How do I report a hate crime or a hate incident?*

Consider reporting the incident to a community organization that is tracking hate crimes. This is only for data collection purposes. You should also report to local law enforcement and the FBI.

### *Resources for more information on...*

Legal aid, working with law enforcement, mental health and more, visit the National Asian Pacific Bar Association's (NAPABA) Hate Crime Resources at: **www.napaba.org/page/HateCrimeResources**

COVID-19, visit the Asian & Pacific Islander American Health Forum's website at: **www.apiahf.org/**

NAPABA

APIAHF ASIAN & PACIFIC ISLANDER AMERICAN HEALTH FORUM

# ຄຳຖາມທີ່ພົບເລື້ອຍ

“ **ອາຊະຍາກຳຈາກຄວາມກຽດຊັງແມ່ນຫຍັງ?** ອາຊະຍາກຳຈາກຄວາມກຽດຊັງແມ່ນອາຊະຍາກຳທີ່ເກີດຂຶ້ນໂດຍອີງໃສ່ເຊື້ອຊາດທີ່ແທ້ຈິງ ຫຼື ຖືກຮັບຮູ້, ສີຜິວ, ສາສະໜາ, ຊາດກຳເນີດ, ລັດທິສະນິຍົມທາງເພດ, ເພດ, ລັກສະນະທາງເພດ ຫຼື ຄວາມພິການຂອງຜູ້ເຄາະຮ້າຍ ”

## ຄວາມແຕກຕ່າງລະຫວ່າງ “ອາຊະຍາກຳຈາກຄວາມກຽດຊັງ” ແລະ “ເຫດການຈາກຄວາມກຽດຊັງ” ແມ່ນຫຍັງ?

ອາຊະຍາກຳຈາກຄວາມກຽດຊັງຕ້ອງກ່ຽວຂ້ອງກັບ “ອາຊະຍາກຳ” ແລະ ມັນກ່ຽວຂ້ອງກັບການຄຸກຄາມ ແລະ/ຫຼື ອາຊະຍາກຳຄວາມຮຸນແຮງເລື້ອຍໆ ເຊັ່ນ: ການຈູ່ໂຈມ, ຄາດຕະກຳ, ການວາງເພີງ, ການທຳລາຍຊັບສິນ ຫຼື ການຂົ່ມຂູ່ວ່າຈະກໍ່ອາຊະຍາກຳເຫຼົ່ານັ້ນ. ມັນອາດຈະຄອບຄຸມເຖິງການບັງຄັບ ຫຼື ຮຽກຮ້ອງໃຫ້ບຸກຄົນອື່ນກໍ່ອາຊະຍາກຳເຫຼົ່ານັ້ນ, ເຖິງແມ່ນວ່າອາຊະຍາກຳບໍ່ໄດ້ຖືກລົງມືປະຕິບັດ.

ເຫດການຈາກຄວາມກຽດຊັງແມ່ນການກະທຳທີ່ມີອະຄະຕິທີ່ບໍ່ແມ່ນອາຊະຍາກຳ ແລະ ບໍ່ກ່ຽວຂ້ອງກັບຄວາມຮຸນແຮງ, ການຂົ່ມຂູ່ ຫຼື ຄວາມເສຍຫາຍທາງຊັບສິນ. ຕົວຢ່າງທີ່ພົບງ່າຍທີ່ສຸດແມ່ນການເວົ້າຈາທີ່ແບ່ງແຍກໃນຮູບແບບການສຽດສີເຊື້ອຊາດ.

## ຍ້ອນຫຍັງຂ້ອຍຈຶ່ງຄວນລາຍງານອາຊະຍາກຳຈາກຄວາມກຽດຊັງ?

ມີຄວາມແຕກໂຕນກັນຫຼາຍລະຫວ່າງອາຊະຍາກຳຈາກຄວາມກຽດຊັງທີ່ເກີດຂຶ້ນແທ້ ກັບ ບັນດາອາຊະຍາກຳທີ່ຖືກລາຍງານເຖິງໜ່ວຍງານບັງຄັບໃຊ້ກົດໝາຍ. ມັນຈຳເປັນທີ່ຈະລາຍງານອາຊະຍາກຳຈາກຄວາມກຽດຊັງ ບໍ່ພຽງແຕ່ເປັນການສະແດງການສະໜັບສະໜູນ ແລະ ຊ່ວຍເຫຼືອຜູ້ເຄາະຮ້າຍເທົ່ານັ້ນ, ແຕ່ຍັງເປັນການສົ່ງຂໍ້ຄວາມທີ່ຊັດເຈນວ່າຊຸມຊົນຈະບໍ່ອົດກັ້ນຕໍ່ກັບອາຊະຍາກຳປະເພດນີ້. ການລາຍງານອາຊະຍາກຳຈາກຄວາມກຽດຊັງເຮັດໃຫ້ຊຸມຊົນ ແລະ ໜ່ວຍງານບັງຄັບໃຊ້ກົດໝາຍເຂົ້າໃຈຢ່າງເຕັມທີ່ເຖິງຂອບເຂດຂອງບັນຫາໃນຊຸມຊົນ ແລະ ນຳໃຊ້ຊັບພະຍາກອນໃນການປ້ອງກັນ ແລະ ຈັດການການໂຈມຕີທີ່ເກີດຈາກອະຄະຕິ ແລະ ຄວາມກຽດຊັງ.  ບໍ່ວ່າເຫດການຈະເປັນອາຊະຍາກຳຈາກຄວາມກຽດຊັງ ຫຼື ເຫດການຈາກຄວາມກຽດຊັງກໍຕາມ, ມັນຄວນຖືກລາຍງານເພື່ອເຮັດໃຫ້ການສືບສວນສາມາດເກີດຂຶ້ນໄດ້.

## ແຫຼ່ງຂໍ້ມູນ

ສຳລັບຂໍ້ມູນເພີ່ມເຕີມກ່ຽວກັບການຊ່ວຍເຫຼືອດ້ານກົດໝາຍ, ການປະສານງານກັບໜ່ວຍງານບັງຄັບໃຊ້ກົດໝາຍ, ສຸຂະພາບຈິດ ແລະ ອື່ນໆ, ກະລຸນາເຂົ້າເບິ່ງແຫຼ່ງຂໍ້ມູນອາຊະຍາກຳຈາກຄວາມກຽດຊັງຂອງ National Asian Pacific Bar Association (NAPABA) ທີ່ (**www.napaba.org/page/HateCrimeResources**)

## ອາຊະຍາກຳຈາກຄວາມກຽດຊັງຕ່າງຈາກອາຊະຍາກຳ “ທົ່ວໄປ” ແນວໃດ?

ອາຊະຍາກຳຈາກຄວາມກຽດຊັງມີຜົນກະທົບທີ່ກວ້າງກວ່າອາຊະຍາກຳປະເພດອື່ນໂດຍສ່ວນໃຫຍ່. ຜູ້ເຄາະຮ້າຍຈາກອາຊະຍາກຳຈາກຄວາມກຽດຊັງບໍ່ພຽງແຕ່ຈະຮວມເອົາເປົ້າໝາຍທັນທີຂອງອາຊະຍາກຳເທົ່ານັ້ນ ແຕ່ຍັງຮວມເອົາເປົ້າໝາຍອື່ນທີ່ຄ້າຍຄືກັນ. ອາຊະຍາກຳຈາກຄວາມກຽດຊັງມີຜົນກະທົບຕໍ່ຄອບຄົວ, ຊຸມຊົນ ແລະ ທົ່ວປະເທດອີກດ້ວຍ.

## ການດຳເນີນຄະດີກ່ຽວກັບອາຊະຍາກຳຈາກຄວາມກຽດຊັງແຕກຕ່າງຈາກອາຊະຍາກຳ “ທົ່ວໄປ” ແນວໃດ?

ກົດໝາຍວ່າດ້ວຍອາຊະຍາກຳຈາກຄວາມກຽດຊັງແຕກຕ່າງກັນໃນແຕ່ລະລັດ. ກົດໝາຍວ່າດ້ວຍອາຊະຍາກຳຈາກຄວາມກຽດຊັງສ່ວນໃຫຍ່ແມ່ນມີການລົງໂທດທີ່ຮຸນແຮງຂຶ້ນ ຖ້າຫາກມີຫຼັກຖານພຽງພໍວ່າຜູ້ກະທຳຜິດໄດ້ກໍ່ອາຊະຍາກຳດ້ວຍແຮງຈູງໃຈທີ່ມາຈາກອະຄະຕິ. ຍິ່ງໄປກວ່ານັ້ນ, ກົດໝາຍວ່າດ້ວຍອາຊະຍາກຳຈາກຄວາມກຽດຊັງບາງຄັ້ງກໍໃຫ້ການຊ່ວຍເຫຼືອດ້ານການເງິນ, ເຕັກນິກ ແລະ ການພິສູດຫຼັກຖານໃຫ້ແກ່ລັດ ແລະ ໜ່ວຍງານບັງຄັບໃຊ້ກົດໝາຍທ້ອງຖິ່ນທີ່ກ່ຽວຂ້ອງກັບການດຳເນີນຄະດີອາຊະຍາກຳຈາກຄວາມກຽດຊັງ. ເຖິງວ່າລັດ ຫຼື ເຂດແດນບໍ່ມີກົດໝາຍວ່າດ້ວຍອາຊະຍາກຳຈາກຄວາມກຽດຊັງກໍຕາມ, ແຕ່ກໍຍັງສາມາດລາຍງານອາຊະຍາກຳຈາກຄວາມກຽດຊັງໄດ້.

## ຂ້ອຍຈະລາຍງານອາຊະຍາກຳຈາກຄວາມກຽດຊັງ ຫຼື ເຫດການຈາກຄວາມກຽດຊັງແນວໃດ?

ພິຈາລະນາລາຍງານເຫດການໄປທີ່ອົງການຈັດຕັ້ງຊຸມຊົນທີ່ຕິດຕາມອາຊະຍາກຳຈາກຄວາມກຽດຊັງ. ນີ້ແມ່ນຈຸດປະສົງເພື່ອເກັບກຳຂໍ້ມູນເທົ່ານັ້ນ. ທ່ານຍັງຄວນລາຍງານໄປທີ່ໜ່ວຍງານບັງຄັບໃຊ້ກົດໝາຍທ້ອງຖິ່ນ ແລະ FBI.

ສຳລັບຂໍ້ມູນເພີ່ມເຕີມກ່ຽວກັບ COVID-19, ກະລຸນາເຂົ້າເບິ່ງເວັບໄຊຂອງ Asian & Pacific Islander American Health Forum ທີ່ (**www.apiahf.org**)